ເພື່ອການຄຸ້ມຄອງທີ່ເຂັ້ມແຂງ
PCAP2 LAO PDR
For Better PIP Management

# ວາລະສານຂ່າວ PCAP2

ສະບັບທີ 8 ເດືອນ 12 ປີ 2010

JICA

## ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການລົງທຶນຂອງລັດ

ຂ່າວເດັ່ນ

- ຄຳນຳ ການດຳເນີນການຄວບຄຸມດູແລການແຂ່ງຂັນເປຕັງ
- ລາຍງານການຝຶກອົບຮົມແລະສຳມະນາ PCAP2 ໃນປີຕໍ່ໄປ
- ແຜນກິດຈະກຳປີທີ 4
- ແນະນຳຜູ້ປະສານງານ PCAP2 ຄົນໃໝ່

# ກິດຈະກຳປີທີ 4 ໄດ້ເລີ້ມຕົ້ນຂຶ້ນແລ້ວ ~ຕົບແຕ່ງຄວາມງາມທີ່ດີເລີດຂອງPCAP2~

## *ຄຳນຳ* ການດຳເນີນການຄວບຄຸມດູແລການແຂ່ງຂັນເປຕັງ

ຫົວໜ້າທີມທີ່ປຶກສາ ທ່ານ ອິຊິໂຣໂອກູມູຣາ

PCAP2 ໄດ້ກ້າວເຂົ້າສູ່ປີຕໍ່ໄປແລ້ວ. ໃນຊ່ວງທີ່ຂ້ອຍກຳລັງຂຽນບົດຄວາມຢູ່ຕອນນີ້ PCAP2 ແມ່ນຢູ່ໃນຊ່ວງຈຸດສູງສຸດ ຂອງການຝຶກອົບຮົມ. ພະນັກງານຈາກພະແນກແຜນການຂອງແຕ່ລະແຂວງໄດ້ຮັບການເຊື້ອເຊີນ, ແລະພະນັກງານເຫຼົ່ານີ້ຈະໄດ້ໃຫ້ຄຳແນະນຳແກ່ພະນັກງານພາກສ່ວນທີ່ກ່ຽວຂ້ອງ ແລະ ພະນັກງານຮັບຜິດຊອບວຽກສະເພາະຂອງແຕ່ລະແຂວງ ຈົນກ່ວາສາມາດເຮັດໃຫ້ພວກເຂົາເຈົ້າໄດ້ຮັບຮູ້ກ່ຽວກັບວິທີການການຄຸ້ມຄອງວຽກງານການລົງທຶນລັດ ຊຶ່ງແມ່ນຈຸດປະສົງຫຼັກຂອງການເຮັດສຳມະນານີ້. ຜູ້ສິດສອນທັງໝົດແມ່ນມາຈາກກະຊວງແຜນການ ແລະ ການລົງທຶນ (MPI) ຊຶ່ງເປັນຜູ້ຮັບຜິດຊອບ. ໃນປະຈຸບັນ ໄດ້ມີການສ້າງຮູບແບບການສິດສອນແບບໃໝ່ ອັນເປັນການຝຶກອົບຮົມທີ່ມີຄຸນນະພາບສູງ. ບັນຍາກາດການຝຶກອົບຮົມ ແມ່ນມີຫຼາກຫຼາຍ ບາງຄັ້ງກໍ່ເຕັມໄປດ້ວຍການສົນທະນາປຶກສາຫາລືກັນ, ບາງຄັ້ງ ກໍ່ເຕັມໄປດ້ວຍສຽງຫົວ ແລະ ການຝຶກປະຕິບັດແມ່ນໄດ້ປະຕິບັດຮ່ວມກັນດ້ວຍຄວາມເອົາຈິງເອົາຈັງຂອງ ທັງຜູ້ສອນ ແລະ ຜູ້ທີ່ມາເຂົ້າຮ່ວມ.

ຫົວຂໍ້ຂອງການຝຶກອົບຮົມໃນເທື່ອນີ້ ແມ່ນຂັ້ນຕອນງົບປະມານການລົງທຶນຂອງລັດ ແລະ ການຄຸ້ມຄອງທາງດ້ານການເງິນ. ໂດຍທຳອິດແມ່ນຕ້ອງໄດ້ມີການກຳໜົດວິທີການເຮັດງົບປະມານປະຈຳປີລ່ວງໜ້າ, ຫຼັງຈາກນັ້ນກໍ່ຕ້ອງແຈ້ງໃຫ້ຜູ້ຮັບຜິດຊອບວຽກ ຫຼື ພະແນກການທີ່ກ່ຽວຂ້ອງດ້ານແຜນການແລະການລົງທຶນ ໃຫ້ໄດ້ຮັບຮູ້ກ່ອນ ເພື່ອໃຫ້ທັນກັບກຳໜົດເວລາຂອງການຍື່ນເອກະສານຕ່າງໆ , ຈາກນັ້ນ ກໍ່ດຳເນີນການເຮັດການສຳຫຼວດ ແລະ ລົງມືປະຕິບັດຕາມແຕ່ລະເງື່ອນໄຂ, ແລ້ວທຳການລວບລວມເອົາລາຍການທາງດ້ານການວາງແຜນ ແລະ ການລົງທຶນທີ່ສຳເລັດອັນຕົ້ນຕໍມາຍື່ນໃຫ້ກະຊວງແຜນການແລະການລົງທຶນ. ນອກຈາກນັ້ນ ໃນແງ່ຂອງການຄຸ້ມຄອງທາງດ້ານການເງິນແລ້ວ, ຈະຕ້ອງແນ່ໃສ ທຳຄວາມເຂົ້າໃຈສະພາບທາງການເງິນຂອງໂຄງການລົງທຶນຂອງລັດ (PIP) ໃນປະຈຸບັນ ແລະຕ້ອງຮັບປະກັນສະຖຽນລະພາບ ທາງດ້ານການເງິນໃຫ້ໄດ້. ຖ້າຫາກຄວາມພະຍາມເຫຼົ່ານີ້ສາມາດເຮັດໄດ້ຢ່າງທົ່ວເຖິງແລ້ວ ຈະບໍ່ກໍ່ໃຫ້ເກີດບັນດາວຽກ ທີ່ບໍ່ທັນກຳໜົດເວລາ, ຫຼືເວົ້າອີກຢ່າງໜຶ່ງກໍ່ຄື ຈະຕ້ອງລະມັດລະວັງ ສະຖຽນລະພາບທາງການເງິນ ທີ່ຈະມີຜົນກະທົບຕໍ່ວຽກງານໃໝ່ ເຊິ່ງທີ່ຜ່ານມາໄດ້ກໍ່ໃຫ້ເກີດສະພາບຄວາມຫຍຸ້ງຍາກໃນການຕັດສິນໃຈຫຼາຍຢ່າງ. ສິ່ງເຫຼົ່ານີ້ໄດ້ກໍ່ໃຫ້ເກີດຄວາມເປັນຫ່ວງເປັນໃຍຂຶ້ນ ໂດຍຜູ້ເຂົ້າຮ່ວມຫຼາຍທ່ານໄດ້ຕັ້ງຄຳຖາມຂຶ້ນມາວ່າ ຖ້າຫາກເຂົ້າໃຈລາຍການຂອງການຝຶກອົບຮົມທຸກຢ່າງແລ້ວ, ຈະສາມາດນຳໃຊ້ເຂົ້າໃນຂະບວນການເຮັດຕົວຈິງໄດ້ຫຼືບໍ່ ເພາະຖ້າບໍ່ມີຂໍ້ມູນ ແລະ ຕົວເລກທີ່ຖືກຕ້ອງແລ້ວ ອາດຈະບໍ່ສາມາດເຮັດໃຫ້ເປັນທີ່ເຊື່ອຖືໄດ້.



ພະນັກງານ MPI ກຳລັງວັດແທກຜົນເປຕັງດ້ວຍຄວາມຕັ້ງໃຈ

ມາເລີ້ມປ່ຽນຫົວຂໍ້ການເວົ້າກັນໜ້ອຍໜຶ່ງ, ທຸກໆມື້ພາຍຫຼັງການຝຶກອົບຮົມໄດ້ສິ້ນສຸດລົງໄດ້ມີການຫຼິ້ນກິລາເປຕັງ. ເປຕັງແມ່ນກິລາທີ່ໄດ້ຮັບຄວາມນິຍົມຫຼາຍໃນປະເທດລາວ. ຖ້າເວົ້າງ່າຍໆກໍ່ຄື ຄ້າຍກັບກິລາ Carling ແຕ່ຫຼິ້ນເທິງຜິວໜ້າດິນ. ຂັ້ນຕອນທຳອິດແມ່ນວາງບານເປົ້າໝາຍໄວ້ເທິງໜ້າດິນຂອງສະໜາມທີ່ມີຄວາມຍາວປະມານ 10 ແມັດ ປະກອບມີ 3 ທີມ ແລ້ວທຳການໂຍນໝາກບານເຫຼັກທີ່ມີຂະໜາດຄ້າຍລູກເທັນນິດສ ເພື່ອເຮັດໃຫ້ໝາກບານດັ່ງກ່າວ ເຂົ້າໄປຫາໝາກບານເປົ້າໝາຍໄດ້ໃກ້ທີ່ສຸດ ເທົ່າທີ່ຈະເຮັດໄດ້. ເຖິງແມ່ນວ່າການແຂ່ງຂັນຢູ່ໃນສະໜາມແມ່ນມີຂອບເຂດຈຳກັດ ແຕ່ມີຫຼາຍຄົນທີ່ຫຼິ້ນໄດ້ເກັ່ງ ໂດຍຜົນການແຂ່ງຂັນແມ່ນວັດຈາກຄວາມໃກ້ຂອງບານຕໍ່ບານເປົ້າໝາຍເປັນມິນລີແມັດ. ໃນຕອນທີ່ທຸກຄົນກຳລັງຈົດຈໍ່ກັບຜົນການແຂ່ງຂັນ ແຕ່ປະກົດວ່າບໍ່ມີເຄື່ອງວັດແທກຄວາມຍາວຢູ່ບໍລິເວນດັ່ງກ່າວ ຈຶ່ງໄດ້ປະຍຸກໃຊ້ເອົາກິ່ງໄມ້ແລະຫຍ້າທີ່ຕົກລົງໃນບໍລິເວນນັ້ນມາເປັນເຄື່ອງວັດແທກແທນໂດຍວັດໄປຕາມຜິວດິນ ພາຍຫຼັງການວັດແທກສິ້ນສຸດລົງ ສະຫຼຸບໄດ້ວ່າ ທຸກໆທີມແມ່ນມີໝາກບານໃກ້ກັບ ໝາກບານເປົ້າໝາຍ. ເມື່ອການແຂ່ງຂັນສິ້ນສຸດ ຖ້າຫາກໃນຈຳນວນຜູ້ແຂ່ງຂັນມີຮອງຫົວໜ້າ ຫຼື ຫົວໜ້າພະແນກປະຈຳຢູ່ ກໍ່ສາມາດຂໍອະນຸຍາດຫຼິ້ນຕໍ່ໄປໄດ້.

# ບົດລາຍງານ ການສຳມະນາ ແລະ ຝຶກອົບຮົມ ກ່ຽວກັບ PCAP2 ໃນປີທີ່ຜ່ານມາ

## ~ເພື່ອຍົກຄວາມສາມາດ ຂອງ ການຖ່າຍທອດທາງເທັກໂນໂລຍີ ~

(ຂຽນໂດຍ : ທ່ານ ນ. ໂທໂມເອະ ໄທຣາ)

ແລະແລ້ວ ໃນວັນທີ 1 ເດືອນ11 ປີ 2010, ກອງປະຊຸມສຳມະນາແລະຝຶກອົບຮົມ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດໃຫ້ ສຳລັບ ປີຕໍ່ໄປ ຂອງໂຄງການ PCAP2 ກໍ່ໄດ້ໄຂຂຶ້ນ. ໃນກອງປະຊຸມສຳມະນາແລະຝຶກອົບຮົມໃນເທື່ອນີ້ ໄດ້ກຳນົດໂຄງສ້າງຂຶ້ນ ໂດຍອີງໃສ່ 4 ລາຍການຫຼັກຄື 1. ເນັ້ນໃສ່ການຈັດສຳມະນາສຳລັບ ພະແນກແຜນແລະລົງທຶນ ບັນດາແຂວງຕ່າງໆ, 2. ການຈັດສຳມະນາແລະຝຶກອົບຮົມໃຫ້ແກ່ຜູ້ຝຶກສອນ (TOT) ຈາກພະແນກແຜນການ ແລະການລົງທຶນຂອງແຂວງ ແລະ ທີ່ມາຈາກກົມແຜນການກະຊວງສູນກາງ, 3. ການຝຶກອົບຮົມໃຫ້ ແກ່ພະນັກງານແຂວງທີ່ຮັບຜິດຊອບວຽກງານແຜນການແລະການລົງທຶນ, 4. ການຝຶກການເຮັດພາກປະຕິບັດຕົວຈິງ (OJT) ໃຫ້ແກ່ພະແນກແຜນການ ແລະ ການລົງທຶນຂອງແຂວງ ແລະ ກົມແຜນການກະຊວງສູນກາງ, . ໂດຍຜ່ານການຝຶກອົບຮົມເຫຼົ່ານີ້, ຈະກໍ່ໃຫ້ເກີດທັກສະ ແລະ ຄວາມຮູ້ທີ່ຈຳເປັນກ່ຽວກັບການຄຸ້ມຄອງການລົງທຶນຂອງລັດ, <u>ແນ່ໃສ່ເພື່ອສ້າງການວາງແຜນງົບປະມານທີ່ຈະໃຊ້ເຂົ້າໃນໂຄງການໃນປີຕໍ່ໄປຢ່າງເໝາະສົມ</u>.

### ການຝຶກອົບຮົມປີຕໍ່ໄປຂອງPCAP2 / ໂຄງການ OJT

| ການຝຶກອົບຮົມ/OJT | ເວລາ | ສະຖານທີ | ໄລຍະເວລາ | ຜູ້ຝຶກສອນ | ຜູ້ເຂົ້າຮ່ວມ | ຈຸດປະສົງການຝຶກອົບຮົມ |
|---|---|---|---|---|---|---|
| 1. ສຳມະນາທີ່ເນັ້ນໃສ່ຫົວໜ້າພະແນກການວາງແຜນແລະການລົງທຶນຂອງແຂວງ | ຕົ້ນເດືອນ 11 ປີ 2010 | ກຳແພງນະຄອນວຽງຈັນ | 2ມື້ | ພະນັກງານວາງແຜນແລະການລົງທຶນ / ຊ່ຽວຊານ PCAP2 | ຫົວໜ້າພະແນກວາງແຜນແລະການລົງທຶນຈາກ17ແຂວງ ລວມທັງໝົດ 68 ຄົນ | ເພື່ອເຮັດໃຫ້ພະແນກວາງແຜນແລະການລົງທຶນຂອງແຂວງເຂົ້າໃຈເຖິງຂະບວນການງົບປະມານ |
| 2. ການຝຶກອົບຮົມທີ່ເນັ້ນໃສ່ພະນັກງານພະແນກວາງແຜນແລະການລົງທຶນຂອງແຂວງແລະ ຈາກໜ່ວຍງານວາງແຜນຂອງລັດຖະບານ | ຕົ້ນເດືອນ 11 – ຕົ້ນເດືອນ12 ປີ 2010 | ກຳແພງນະຄອນວຽງຈັນ | 5 ມື້ | ພະນັກງານວາງແຜນແລະການລົງທຶນ | ພະນັກງານມາຈາກພະແນກວາງແຜນແລະການລົງທຶນ ຈາກທັງໝົດ 17 ແຂວງແລະ 8 ໜ່ວຍງານຈາກລັດຖະບານ ລວມທັງໝົດ 142 ຄົນ | ເພື່ອໃຫ້ພະແນກວາງແຜນແລະການລົງທຶນ ແລະພະແນກວາງແຜນຂອງລັດຖະບານໄດ້ເຂົ້າໃຈເຖິງຂະບວນການຕັ້ງງົບປະມານໃນປີຕໍ່ໄປ ຂອງ PIP ແລະວິທີການໃຊ້, ໂດຍຜູ້ຮັບຜິດຊອບ PIP ຈະເປັນຜູ້ສອນໃຫ້ |
| 3. ການຝຶກອົບຮົມພະນັກງານຈາກພາກສ່ວນພະແນກວາງແຜນແລະການລົງທຶນຂອງແຂວງໄປເຖິງຜູ້ຮັບຜິດຊອບວຽກງານຂອງແຂວງ | ເດືອນ 12 ປີ 2010 | ແຕ່ລະແຂວງ, ໜ່ວຍງານລັດຖະບານ | 2 ມື້ | ພະນັກງານຈາກພະແນກວາງແຜນແລະການລົງທຶນຂອງແຂວງ | ຜູ້ຮັບຜິດຊອບວຽກ ທີ່ມາຈາກ 8 ພາກສ່ວນຂອງແຂວງ ລວມທັງໝົດ 816 ຄົນ | ເພື່ອເຮັດໃຫ້ຜູ້ຮັບຜິດຊອບ PIPໄດ້ເຂົ້າໃຈເຖິງຂະບວນການງົບປະມານຂອງ PIP ແລະວິທີການໃນປີຕໍ່ໄປ |
| 4. ໂຄງການ OJT ຂອງພະແນກວາງແຜນແລະການລົງທຶນຂອງແຂວງ ແລະ ພະແນກວາງແຜນຂອງລັດຖະບານ | ເດືອນ 2 3 ປີ 2011 | ແຕ່ລະແຂວງ, ໜ່ວຍງານລັດຖະບານ | 2 ມື້ | ພະນັກງານການວາງແຜນແລະລົງທຶນ ຈາກພາກລັດ | ພະນັກງານຈາກພະແນກວາງແຜນແລະການລົງທຶນ ຈາກ 17 ແຂວງ ແລະອີກ 8 ພາກສ່ວນຂອງລັດຖະບານ | ເພື່ອເຮັດໃຫ້ພະແນກວາງແຜນແລະການລົງທຶນຂອງແຂວງ ແລະຂອງລັດຖະບານໄດ້ຮັບທຶນທີ່ຈຳເປັນ, ແລ້ວມີການກວດກາວຽກ, ປະເມີນວຽກ ແລະວາງງົບປະມານ PIP ໃນປີຕໍ່ໄປ |

## ຄັ້ງທຳອິດຂອງ PCAP2 ທີ່ມີການຈັດສຳມະນາ ຝຶກອົບຮົມພາກປະຕິບັດ ເນັ້ນໃສ່ຫົວໜ້າ

ໃນຊ່ວງວັນທີ່ 1-4 ເດືອນ 11 ປີ 2010 ນັ້ນ, ກອງປະຊຸມສຳມະນາຂະບວນການຄຸ້ມຄອງການລົງທຶນຂອງລັດ ແລະການຄຸ້ມຄອງທາງດ້ານການເງິນການລົງທຶນຂອງລັດໄດ້ໄຂຂຶ້ນ ໂດຍເນັ້ນໃສ່ຜູ້ເຂົ້າຮ່ວມທີ່ເປັນຫົວໜ້າແລະຮອງຫົວໜ້າພະແນກ ແຜນການ ແລະ ການລົງທຶນຈາກ 16 ແຂວງ ແລະຈາກນະຄອນຫຼວງວຽງຈັນ. ຜູ້ເຂົ້າຮ່ວມທັງໝົດໄດ້ຮັບຈັກຄິດໄລ່ເລກໜຶ່ງອັນ ແລະໄດ້ທຳການວິເຄາະສະພາບທາງດ້ານການເງິນການລົງທຶນຂອງລັດໃນແຕ່ລະແຂວງ, ພາຍຫຼັງໄດ້ຮັບຜົນຂອງການວິເຄາະແລ້ວ ຜູ້ເຂົ້າຮ່ວມກໍ່ໄດ້ສະຫຼຸບ ແລະຫາວິທີການປັບປຸງແກ້ໄຂທາງດ້ານການເງິນໄລຍະກາງ ແລະລາຍລະອຽດກິດຈະກຳ ທີ່ຈຳເປັນອື່ນໆ. ສຳຫຼັບວິທີການປັບປຸງແກ້ໄຂທີ່ສັງເກດເຫັນໄດ້ໂດຍທົ່ວໄປແລ້ວປະກອບມີ 1. ພະຍາຍາມບໍ່ເພີ່ມລາຍຈ່າຍທີ່ຈຳເປັນ, 2. ຫຼຸດໄລຍະເວລາການຈ່າຍໃຫ້ສັ້ນລົງ, 3. ເຂົ້າໃຈສະພາບການຂາດແຄນງົບປະມານ ແລະໃຊ້ງົບປະມານຢ່າງມີປະສິດທິຜົນ. ເຖິງຢ່າງໃດກໍ່ຕາມ, ໄດ້ມີຜູ້ເຂົ້າຮ່ວມສ່ວນໜຶ່ງໄດ້ໃຫ້ທັດສະນະວ່າ ຖ້າຢາກຄວບຄຸມການເພີ່ມຂຶ້ນຂອງງົບປະມານການໃຊ້ຈ່າຍ ແມ່ນຈະຕ້ອງໄດ້ຄວບຄຸມງົບປະມານການໃຊ້ຈ່າຍເຂົ້າໃນໂຄງການໃໝ່ ຊຶ່ງສິ່ງນີ້ ຈະເຮັດໃຫ້ແຜນພັດທະນາເສດຖະກິດສັງຄົມຂອງແຂວງ ໃນໄລຍະ 5 ປີຂ້າງໜ້າ ບໍ່ສາມາດບັນລຸເປົ້າໝາຍໄດ້, ໂດຍໃນພາກປະຕິບັດຕົວຈິງ ບັນຫານີ້ຈະຍັງຄົງຄ້າງສືບຕໍ່ໄປ. ນອກຈາກນັ້ນແລ້ວຍັງມີຄຳແນະນຳໃຫ້ຈັດມີການຝຶກອົບຮົມດ້ານການຕັດສິນໃຈໃຫ້ ບັນດາເຈົ້າແຂວງແລະຮອງເຈົ້າແຂວງ, ສ່ວນການສ້າງເນື້ອໃນການຝຶກອົບຮົມກ່ຽວກັບການນຳໃຊ້ແຜນງົບປະມານການຄຸ້ມຄອງການລົງທຶນຂອງລັດແລ້ວ ຈະຕ້ອງມີການສົ່ງເສີມຄວາມເຂົ້າໃຈກ່ຽວກັບຂະບວນການຕັດສິນໃຈ, ໂດຍມີຄວາມຈຳເປັນຕ້ອງເນັ້ນໄປໃສ່ກະຊວງແຜນການແລະການລົງທຶນແລ້ວລົງໄປສູ່ແຂວງຕ່າງໆ.



*ການສຳມະນາທີ່ເນັ້ນຜູ້ເຂົ້າຮ່ວມຈາກແຂວງພາກກາງແລະພາກໃຕ້ (ເດືອນ11 ວັນທີ່ 1-2)*



*ການສຳມະນາທີ່ເນັ້ນຜູ້ເຂົ້າຮ່ວມຈາກແຂວງພາກເໜືອ (ເດືອນ11 ວັນທີ່ 3-4)*

# ຕໍ່ຈາກນີ້ໄປ, ແຂວງຈະກາຍເປັນຈຸດສຸມຫຼັກ !

ໄດ້ມີການຝຶກອົບຮົມຜູ້ຝຶກສອນຂຶ້ນ ໂດຍໃນຊ່ວງວັນທີ 8-12 ເດືອນ ພະຈິກ ປີ2010 ທີ່ຜ່ານມານັ້ນໄດ້ຈັດໃຫ້ ພະແນກແຜນການ ແລະການລົງທຶນ 4 ແຂວງພາກກາງ ແລະ ນະຄອນຫຼວງວຽງຈັນ, ວັນທີ 15-19 ແມ່ນຈັດໃຫ້ພະແນກແຜນການ ແລະ ການລົງທຶນຂອງ 6 ແຂວງພາກເໜືອແລະພາກໃຕ້ຕາມລຳດັບ. ເມື່ອໂຄງການ PCAP2 ໄດ້ເລີ່ມຕົ້ນຂຶ້ນ, ພະນັກງານພະແນກແຜນການ ແລະ ການລົງທຶນຂອງແຂວງ ແມ່ນບໍ່ໄດ້ຮັບການຖ່າຍທອດເທັກໂນໂລຊີໃໝ່ໃດໆ ແຕ່ສິ່ງທີ່ພວກເຂົາໄດ້ຮັບກໍ່ຄື ການຝຶກສອນໃຫ້ເປັນຜູ້ສິດສອນໂດຍສິ່ງນີ້ໄດ້ກາຍເປັນບາດກ້າວໜຶ່ງທີ່ມີຄວາມໝາຍສຳຄັນ. ແລະ ໃນເດືອນຕໍ່ໄປ ແຂວງຈະກາຍເປັນຈຸດໃຈກາງ ເພື່ອດຳເນີນການຝຶກອົບຮົມການຄຸ້ມຄອງດ້ວຍຕົນເອງ, ໂດຍໃຊ້ລະດັບຄວາມເອົາຈິງເອົາຈັງທີ່ແຕກຕ່າງກັນໄປ. ເນື້ອຫາແຕ່ລະຢ່າງນັ້ນ ແມ່ນໄດ້ມີການທົບທວນຄຳຖາມຢ່າງຖີ່ຖ້ວນ ຈົນເກີດຄວາມເຂົ້າຢ່າງແທ້ຈິງ ພ້ອມກັນນັ້ນກໍ່ໄດ້ມີການຈຳລອງການຢືນຢູ່ເທິງເວທີ ເພື່ອທຳການຝຶກຊ້ອມວິທີການການນຳສະເໜີ. ພາຍຫຼັງການຝຶກຊ້ອມເຫຼົ່ານີ້ແລ້ວ ໃນທີ່ສຸດພວກເຂົາກໍ່ຈະສາມາດເວົ້າໄດ້"ຕໍ່ຈາກນີ້ໄປພວກເຮົາຈະມີບົດບາດສູງຂຶ້ນແລ້ວ" ແລະຈະກໍ່ໃຫ້ເກີດຄວາມໝັ້ນໃຈ,ຄວາມຮັບຜິດຊອບ, ແລະ ຄວາມປະທັບໃຈຫຼັງເຫຼືອຢູ່. ພະແນກແຜນການ ແລະ ການລົງທຶນຂອງແຂວງຫວັງເປັນຢ່າງຫຍິ່ງວ່າ, ວິທີການການຄຸ້ມຄອງການລົງທຶນຂອງລັດ. ຈະກາຍເປັນເຄື່ອງມືຖ່າຍທອດແລະກໍ່ໃຫ້ເກີດປະໂຫຍດໄດ້.



*ພະນັກງານວາງແຜນແລະການລົງທຶນຂອງແຂວງສະຫວັນນະເຂດ ດຳເນີນການຈຳລອງ ແບບຝຶກການຄຸ້ມຄອງຄູ່ຮ່ວມກອງທຶນຂອງ ODA*



*ທົບທວນຂະບວນການເຮັດວຽກແລະ ການສ້າງແຜນງົບປະມານປະຈຳປີ ໂດຍທ່ານ ນີຊິມູລາ (ຄົນກາງ) ກັບພະນັກງານການວາງແຜນ ແລະການລົງທຶນຂອງແຂວງສາລະວັນທັງໝົດ*

**ຫົວໜ້າກຸ່ມນີຊິມູລາ (ພະແນກ ແຜນການ ແລະ ການລົງທຶນ ແຂວງສາລະວັນ) ~ຄວາມເຫັນກ່ຽວກັບການສຳມະນາ~**

ຜູ້ເຂົ້າຮ່ວມທຸກຄົນ ແມ່ນໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຕອບຄຳຖາມ ແລະ ການສົນທະນາອັນມີຊີວິດຊີວາ ອັນໄດ້ສ້າງຄວາມປະທັບໃຈໃຫ້ຂ້ອຍໂດຍບໍ່ມີວັນລືມ. ໂດຍສະເພາະແລ້ວ ຈຸດທີ່ຂ້ອຍຄິດວ່າເຮັດໄດ້ດີຫຼາຍກໍ່ແມ່ນໃນແຕ່ລະກຸ່ມ ຈະມີພະນັກງານ MPI ປະຈຳຢູ່ນຳ. ພະນັກງານແຜນການ ແລະການລົງທຶນ ຂອງແຂວງສາລະວັນ ໄດ້ກ່າວວ່າ ຖ້າຫາກວ່າບໍ່ໄດ້ຍິນຄຳບັນຍາຍ ຫຼື ບໍ່ເຂົ້າໃຈການເຮັດພາກປະຕິບັດຕົວຈິງແລ້ວ ນະທີ່ນັ້ນກໍ່ຈະສາມາດສອບຖາມພະນັກງານ MPI ໄດ້, ຈຶ່ງເຮັດໃຫ້ຄວາມສາມາດໃນການເຂົ້າໃຈ ມີສູງຂຶ້ນ. ເຖິງຢ່າງໃດກໍ່ຕາມ, ຂ້ອຍຄິດວ່າ ສິ່ງທີ່ສຳຄັນທີ່ສຸດບໍ່ແມ່ນ 「ການໄດ້ເຂົ້າຮ່ວມການຝຶກອົບຮົມ」 ຫາກແມ່ນຄວາມຮູ້ທີ່ໄດ້ຈາກການຝຶກອົບຮົມ, ແລະສິ່ງທີ່ເຮົາຈະສາມາດນຳໄປໃຊ້ໃນຊີວິດປະຈຳວັນໄດ້ຈິງ. ຂ້ອຍຫວັງວ່າ ການຝຶກອົບຮົມນີ້ ພະນັກງານ DPI ທຸກໆທ່ານ ເມື່ອກັບສູ່ບ່ອນເຮັດວຽກຂອງຕົນເອງແລ້ວ ຈະສາມາດຄຸ້ມຄອງໂຄງການການລົງທຶນຂອງລັດໄດ້ດີຂຶ້ນຫຼາຍກ່ວາເກົ່າ.

**ຫົວໜ້າກຸ່ມລິສຸກະ (ພະແນກແຜນການ ແລະ ການລົງທຶນແຂວງຄຳມ່ວນ) ~ພາຍຫຼັງເຂົ້າຮ່ວມການສຳມະນາແລະການຝຶກອົບຮົມ~**

ສະບາຍດີ. ຂ້ອຍຊື່ວ່າລິສຸກະ ໄທເສ ໄດ້ຮັບມອບໝາຍມາເຮັດວຽກDPIຢູ່ແຂວງຄຳມ່ວນ. ຂ້ອຍໄດ້ມີໂອກາດເຂົ້າຮ່ວມການສຳມະນາໃນຊ່ວງວັນທີ 1-4 ເດືອນ 11 ແລະການສຳມະນາທີ່ເນັ້ນຜູ້ເຂົ້າຮ່ວມຈາກແຂວງພາກກາງ ໃນຊ່ວງວັນທີ 8-12 ເດືອນ 11. ຂ້ອຍໄດ້ສັງເກດເຫັນການສິດສອນຊຶ່ງກັນແລະກັນກ່ຽວກັບແບບຝຶກຫັດລອງສະຖານະການທາງດ້ານການເງິນ, ຄວາມກະຕືລືລົ້ນຂອງຜູ້ເຂົ້າຮ່ວມກອງປະຊຸມສົນທະນາປຶກສາຫາລື, ແລະທັດສະນະຄະຕິໃນທາງບວກຂອງຜູ້ເຂົ້າຮ່ວມການຝຶກອົບຮົມ. ພະນັກງານ MPI ໄດ້ທຳການຝຶກອົບຮົມການຄຸ້ມຄອງ, ໂດຍທີ່ພະນັກງານຜູ້ນຸ່ມນ້ອຍໄດ້ສວມບົດບາດເປັນຜູ້ຝຶກສອນ ແລະອຳນວຍຄວາມສະດວກໃຫ້ແກ່ຜູ້ເຂົ້າຮ່ວມການຝຶກອົບຮົມ. ເຫັນໄດ້ວ່າຕັ້ງແຕ່ປີທີ່ຜ່ານມາ PCAP2ໄດ້ສືບຕໍ່ກ້າວໄປຂ້າງໜ້າ ແລະພະນັກງານ MPI、DPI ແມ່ນໄດ້ມີຄວາມເຂົ້າໃຈເລິກເຊິ່ງຂຶ້ນກ່ຽວກັບວິທີການຄຸ້ມຄອງການລົງທຶນຂອງລັດ, ຊຶ່ງເຮັດໃຫ້ພວກເຂົາເຈົ້າ ມີຄວາມສາມາດນຳພາແລະມີຄວາມກະຕືລືລົ້ນໃນການເຮັດວຽກຕໍ່ໄປ.



*ສະມາຊິກ ທ່ານລິສຸກາ (ຜູ້ທີ່ສອງ ຈາກຊ້າຍມື) ໄດ້ສ້າງແຜນຫຼັກ ເພື່ອພັດທະນາຄຸນນະພາບແລະການປະເມີນຜົນຂອງໂຄງການ ໃຫ້ແກ່ພະນັກງານພະແນກແຜນການ ແລະການລົງທຶນລັດທີ່ມາຈາກແຂວງຄຳມ່ວນ*

# ແຜນກິດຈະກຳປີທີ່ 4

**ນັບຕັ້ງແຕ່ເດືອນ 10 ປີ 2010 ເປັນຕົ້ນໄປ ກິດຈະກຳປີທີ່ 4 ກໍ່ໄດ້ເລີ່ມຕົ້ນຂຶ້ນ ! ຂໍແນະນຳກິດຈະກຳຈົນສິ້ນສຸດປີດັ່ງຕໍ່ໄປນີ້.**

| ເດືອນ ປີ | ກິດຈະກຳຫຼັກ |
|---|---|
| ເດືອນ 10 ປີ 2010 | ・ເລີ່ມຕົ້ນກິດຈະກຳປີທີ່ 4<br>・ການຝຶກອົບຮົມການສ້າງແຜນງົບປະມານ PIP、ການຝຶກອົບຮົມການກວດກາການຄຸ້ມຄອງດ້ານການເງິນແລະການທົບທວນການຝຶກອົບຮົມ (ເດືອນ10〜ເດືອນ11)<br>・ວິທີການກວດກາການຄຸ້ມຄອງ PIPລະດັບປະເທດ ແລະ ການຝຶກອົບຮົມການກວດກາແລະປັບປຸງປຶ້ມຄູ່ມື (ເດືອນ10〜ເດືອນ12) |
| ເດືອນ 11 | ・ດຳເນີນການຝຶກອົບຮົມໃຫ້ແກ່ແຂວງແລະອົງການຂອງລັດຖະບານ (ທີ່ນະຄອນຫຼວງວຽງຈັນ) (ເດືອນ11〜ເດືອນ12) |
| ເດືອນ 12 | ・ດຳເນີນການຝຶກອົບຮົມໃຫ້ແກ່ແຂວງແລະອົງການຂອງລັດຖະບານ (ທີ່ນະຄອນຫຼວງວຽງຈັນ、ແຕ່ລະແຂວງ・ອົງການລັດຖະບານ) (ເດືອນ12〜ເດືອນ1)<br>・ການແນະນຳວິທີການຄຸ້ມຄອງດູແລກອງທຶນຂອງຄູ່ຮ່ວມງານຂອງ ODA ແລະ ການຝຶກອົບຮົມການກວດກາແລະປັບປຸງປຶ້ມຄູ່ມື (ເດືອນ12〜ເດືອນ1) |
| ເດືອນ 1 ປີ 2011 | ・ການກວດກາສະພາບການປະຕິບັດການບັງຄັບໃຊ້ກົດໝາຍ (ເດືອນ1〜ເດືອນ3) |
| ເດືອນ 2 | ・ກອງປະຊຸມຄະນະກຳມະການຮ່ວມ (JCC) ຄັ້ງທີ່ 6<br>・MPI、ແຂວງແລະອົງການຂອງລັດຖະບານ ໄປຫາ OJT (ແຕ່ລະແຂວງ・ອົງການລັດຖະບານ) (ເດືອນ2〜ເດືອນ5) |
| ເດືອນ 3 | |
| ເດືອນ 4 | ・ການຝຶກອົບຮົມທີ່ມະເລເຊຍຄັ້ງທີ່ 3 |
| ເດືອນ 5 | ・ການປະເມີນຜົນຊ່ວງໄລຍະການສິ້ນສຸດ JICA<br>・ການຝຶກອົບຮົມແລະການທົບທວນ PIP・ການຕິດຕາມກວດກາ・ການປະເມີນຜົນຂອງການປະເມີນ (ເດືອນ5〜ເດືອນ7)<br>・ການແນະນຳວິທີການປັບປຸງການຄຸ້ມຄອງດູແລກອງທຶນຂອງຄູ່ຮ່ວມງານ ODA ແລະການຝຶກອົບຮົມການກວດກາການປັບປຸງປຶ້ມຄູ່ມື (ເດືອນ5〜ເດືອນ6)<br>・ວິທີການກວດກາການຄຸ້ມຄອງ PIPລະດັບປະເທດ ແລະ ການຝຶກອົບຮົມການຕິດຕາມກວດກາແລະປັບປຸງປຶ້ມຄູ່ມື (ເດືອນ5〜ເດືອນ6) |
| ເດືອນ 6 | ・ການຝຶກອົບຮົມການສ້າງແຜນງົບປະມານ PIP、ການຝຶກອົບຮົມການກວດກາການຄຸ້ມຄອງດ້ານການເງິນ ແລະ ການທົບທວນການຝຶກອົບຮົມ |
| ເດືອນ 7 | ・ການກວດກາສະພາບການປະຕິບັດການບັງຄັບໃຊ້ກົດໝາຍ (ເດືອນ 7〜ເດືອນ 8)<br>・ການຝຶກອົບຮົມ・ຄຳຕຳໜິຕິຊົມກ່ຽວກັບການວິເຄາະຜົນການປະເມີນ OJTໂດຍໃຊ້ OJTເປັນເປົ້າໝາຍ ( ເດືອນ 7〜ເດືອນ 8 )<br>・ການດຳເນີນການໃຫ້ຄຳທີ່ປຶກສາໃນການກ້າວເຂົ້າເປັນສະຖາບັນການຝຶກອົບຮົມ (ເດືອນ 7〜ເດືອນ 8 ) |
| ເດືອນ 8 | ・ສຳມະນາຄັ້ງສຸດທ້າຍ<br>・ກອງປະຊຸມ JCC ຄັ້ງທີ່ 7 |

# ແນະນຳໃຫ້ຮູ້ຈັກກັບພະນັກງານໂຄງການຄົນໃໝ່

● ໄດ້ມີການມອບໝາຍຜູ້ປະສານງານໂຄງການຄົນໃໝ່ແລ້ວ●



*ຖ່າຍຢູ່ເກາະຄາລິບຽນ, ໃນເຂດເຊັນໂຕເຊຍ*

**New Project Coordinator**

**ທ່ານ ນ. ຊີຣິໂຣະ ນາກາມູຣະ**

ສະບາຍດີ ! ຍິນດີທີ່ໄດ້ຮູ້ຈັກ

PCAP2 ປີທີ4 ນີ້ໄດ້ມີສະມາຊິກໃໝ່ເພີ່ມເຂົ້າມາແລ້ວ, ນັ້ນກໍ່ຄືຂ້ອຍເອງ ນາງ ຊີຣິໂຣະ ນາກາມູຣະ. ຍ້ອນວ່າເນື້ອຫາຂອງ PCAP2 ເປັນໂຄງການເບິ່ງຄ້າຍຄືຈະຫຍຸ້ງຍາກຫຼາຍ, ດັ່ງນັ້ນຂ້ອຍຈຶ່ງສູ້ຊົນ ແລະ ຕັດສິນໃຈມາປະເທດລາວ. ເມື່ອໄດ້ມາຮອດປະເທດລາວແລ້ວ ຂ້ອຍໄດ້ມີໝູ່ຮ່ວມງານທີ່ດີ ຢູ່ຫ້ອງການກໍ່ມີພະນັກງານຫ້ອງຖິ່ນທີ່ເກັ່ງເຮັດໃຫ້ການເຮັດວຽກງານຕ່າງໆດຳເນີນໄປດ້ວຍຄວາມສະດວກສະບາຍ,ແລະຄວາມຮູ້ສຶກເປັນກັງວົນໃນເບື້ອງຕົ້ນຂອງຂ້ອຍກໍ່ຫາຍໄປ. ນະຄອນວຽງຈັນເປັນຕົວເມືອງທີ່ນ່າຢູ່,ເຮັດໃຫ້ຊີວິດການເຮັດວຽກ ໃນແຕ່ລະມື້ຂອງຂ້ອຍມີຄວາມໝາຍຫຍິ່ງຂຶ້ນ. ຂ້ອຍຢາກຮຽນພາສາລາວ ສະນັ້ນ ກາລຸນາ ສອນຂ້ອຍແດ່.

## ● ບົດບັນທຶກຈາກບັນນາທິການ ●

ໃນຊ່ວງທ້າຍອາທິດທີ່ຜ່ານມາໄດ້ມີບຸນອອກພັນສາຢູ່ທີ່ປະເທດລາວ。ບຸນເຂົ້າພັນສາແມ່ນໄດ້ເລີ່ມຕົ້ນມາຕັ້ງແຕ່ວັນທີ 26 ເດືອນ 7、ໂດຍໃນຊ່ວງ 3 ເດືອນນີ້ ບັນດາພະສົງສຳມະເນນທັງຫຼາຍຈະໄດ້ເຂົ້າຮ່ວມການຝຶກຈຳສິນ。ໃນມື້ອອກພັນສາ ຕອນກາງຄືນກໍ່ໄດ້ມີພິທີການລອຍກະທົງຢູ່ຕາມລຽບລຳແມ່ນ້ຳຂອງ。ບັນດາຝູງຊົນແມ່ນໃຊ້ ກະທົງທີ່ມີຮູບຮ່າງຄ້າຍຄືເຮືອນ້ອຍທີ່ເຮັດດ້ວຍ ໃບຕອງ, ດອກໄມ້, ຈູດທູບທຽນ ແລ້ວອະທິຖານກ່ອນປ່ອຍໃຫ້ລອຍໄປຕາມນ້ຳ。ສ່ວນຂ້ອຍເອງກໍ່ໄດ້ອະທິຖານໃຫ້ ກິດຈະກຳຂອງ PCAP2 ຈົ່ງປະສົບຜົນສຳເລັດໄປດ້ວຍດີ ແລ້ວປ່ອຍກະທົງໃຫ້ໄຫຼໄປຕາມນ້ຳ. (ຂຽນໂດຍ : ນາກາມູຣະ)

【ຕິດຕໍ່ສອບຖາມ・ທີ່ຢູ່ໄປສະນີ】

- ຫ້ອງການໂຄງການ : Ministry of Planning and Investment, Avenue Souphanouvong, Vientiane
- ຕູ້ໄປສະນີ : C/O JICA Laos Office, P.O.Box 3933, Avenue Souphanouvong, Vientiane
- ໂທລະສັບຫ້ອງການ : ＋856(0)21.243.687
- ອີເມລ: pcap2@icnet.co.jp
- ໂຮມເພດ : http://www.jica.go.jp/project/english/laos/0700667/index.html



ອີກບໍ່ພໍເທົ່າໃດກໍ່ຈະໝົດປີນີ້ແລະກ້າວເຂົ້າສູ່ປີໃໝ່,ແຕ່ຂ້ອຍກໍ່ຍັງບໍ່ທັນເຂົ້າໃຈພາສາລາວຢູ່ດີ.ມີພາສາລາວຄຳໜຶ່ງທີ່ຂ້ອຍຈື່ໄດ້ດີກໍ່ຄື「ບໍ່ເປັນຫຍັງ. ຄຳນີ້ເປັນຄຳທີ່ມີປະໂຫຍດຫຼາຍ, ແຕ່ວ່າກ່ຽວກັບວຽກແລ້ວຢາກໃຫ້ເປັນ「ບໍ່ເປັນຫຍັງບໍ່」ໂດຍໃຫ້ເວລາ 17 ໂມງຂຶ້ນໄປແມ່ນອະນຸຍາດໃຫ້ເຮັດຫຍັງກໍ່ໄດ້❤ (ໂຕ ກູຣະ)